ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ 314 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 29 ສິງຫາ 2018

# ແຈ້ງການ

**ເຖິງ:** ພໍ່ແມ່ປະຊາຊົນ, ຊາວຄ້າຂາຍ, ພະນັກງານ, ທະຫານ ແລະ ຕຳຫຼວດ ໃນຂອບເຂດທົ່ວປະເທດ

**ເລື່ອງ:** ການນຳໃຊ້ ແລະ ລົງທຶນຊື້-ຂາຍ ເງິນຄຣິບໂຕ (Cryptocurrency).

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍວ່າດ້ວຍລະບົບການຊຳລະ ສະບັບເລກທີ 32/ສພຊ, ລົງວັນທີ 07 ພະຈິກ 2017.

ຫ້ອງການທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງ ພໍ່ແມ່ປະຊາຊົນ, ຊາວຄ້າຂາຍ, ພະນັກງານທະຫານ ແລະ ຕຳຫຼວດ ໃນຂອບເຂດທົ່ວປະເທດ ຊາບວ່າ: ປະຈຸບັນ ການພັດທະນາທາງດ້ານເຕັກໂນໂລຊີມີຄວາມກ້າວໜ້າ ແລະ ຂະຫຍາຍຢ່າງກວ້າງຂວາງໃນຈັງຫວະທີ່ໄວ ໂດຍໄດ້ມີການນຳເອົາເຕັກໂນໂລຊີ Blockchain ມາໃຊ້ໃນການເຮັດທຸລະກຳທາງດ້ານການເງິນ ແລະ ພັດທະນາຮູບແບບການໃຫ້ບໍລິການທາງການເງິນໃນລັກສະນະຕ່າງໆ ລວມທັງການກຳເນີດຂອງເງິນຄຣິບໂຕ (Cryptocurrency) ເປັນຕົ້ນແມ່ນເງິນຄຣິບໂຕສະກຸນ: Bitcoin, Ethereum, Litecoin ແລະ ອື່ນໆ. ໃນ ສປປ ລາວ ກໍເລີ່ມມີການໂຄສະນາຊວນເຊື່ອໃຫ້ມີການນຳໃຊ້ເງິນຄຣິບໂຕເຂົ້າໃນການຊຳລະຄ່າສິນຄ້າ ແລະ ບໍລິການ, ມີການໂຄສະນາໃຫ້ລົງທຶນ, ຊື້-ຂາຍ ຫຼື ດຳເນີນທຸລະກຳທາງການເງິນທີ່ກ່ຽວຂ້ອງກັບເງິນຄຣິບໂຕ ໂດຍອ້າງວ່າເປັນເງິນດິຈິຕອນ (Digital Currency) ທີ່ມີຄົນນິຍົມໃຊ້ໃນທົ່ວໂລກ.

ຫ້ອງການທະນາຄານແຫ່ງ ສປປ ລາວ ຈຶ່ງຂໍຖືເປັນກຽດແຈ້ງມາຍັງທ່ານ ດັ່ງນີ້:

1. ເງິນຄຣິບໂຕ ບໍ່ແມ່ນເງິນ ແລະ ບໍ່ແມ່ນເຄື່ອງມື ທີ່ສາມາດນຳໃຊ້ເພື່ອການຊຳລະໜີ້ໄດ້ຕາມກົດໝາຍຂອງ ສປປ ລາວ ເນື່ອງຈາກເງິນຄຣິບໂຕ ບໍ່ມີຄຸນສົມບັດເປັນເງິນທີ່ໃຊ້ເພື່ອການຊຳລະໜີ້ໄດ້ຕາມກົດໝາຍ ແລະ ຍັງບໍ່ມີນິຕິກຳທີ່ກຳນົດໃຫ້ພາກສ່ວນໃດ ເປັນຜູ້ຄຸ້ມຄອງວຽກງານດັ່ງກ່າວໃນ ສປປ ລາວ;

2. ການລົງທຶນ ຫຼື ຊື້-ຂາຍ ເງິນຄຣິບໂຕ, ປະຊາຊົນຄວນມີສະຕິລະມັດລະວັງ ແລະ ສຶກສາຂໍ້ມູນໃຫ້ລະອຽດເລິກເຊິ່ງ ເພາະວ່າ ເງິນຄຣິບໂຕ ມີຄວາມສ່ຽງຫຼາຍດ້ານ ເປັນຕົ້ນແມ່ນ ຄວາມສ່ຽງດ້ານການຟອກເງິນ ແລະການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ຄວາມສ່ຽງດ້ານລາຄາທີ່ຜັນຜວນສູງ, ຄວາມສ່ຽງດ້ານເຕັກໂນໂລຊີ ແລະ ອາດເປັນຊ່ອງທາງຂອງກຸ່ມຄົນບໍ່ດີໃຊ້ເພື່ອຫຼອກລວງ ຫຼື ສໍ້ໂກງປະຊາຊົນໄດ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ພໍ່ແມ່ປະຊາຊົນ, ຊາວຄ້າຂາຍ, ພະນັກງານ, ທະຫານ ແລະ ຕຳຫຼວດ ໃນຂອບເຂດທົ່ວປະເທດ ເພື່ອຊາບ ແລະ ຫຼີກລ້ຽງການນຳໃຊ້ ແລະ ຊື້-ຂາຍເງິນຄຣິບໂຕ.

ຫົວໜ້າຫ້ອງການ

ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ

ສາມາດແຈ້ງ ຫຼື ສອບຖາມຂໍ້ມູນເພີ່ມເຕີມ:

ໂທ: 021 253595 ແລະ 253597